ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 58 /ລບ
ນະຄອນຫຼວງວຽງຈັນ, ວັນທີ 28/01/25

# ດຳລັດ
# ວ່າດ້ວຍລະບົບລະຫັດສາລະບານສະຖິຕິ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍສະຖິຕິ ສະບັບເລກທີ 24/ສພຊ, ລົງວັນທີ 11 ພຶດສະພາ 2017;
- ອີງຕາມ ໜັງສືສະເໜີ ຂອງກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 2485/ຜທ, ລົງວັນທີ 21 ກັນຍາ 2024.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ ກວດກາ ວຽກງານລະບົບລະຫັດສາລະບານສະຖິຕິ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດພາບ ແລະ ປະສິດທິຜົນ ແນໃສ່ຮັບປະກັນໃຫ້ລະບົບລະຫັດສາລະບານສະຖິຕິ ມີຄວາມຖືກຕ້ອງ, ຄົບຖ້ວນ, ຊັດເຈນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ, ສາມາດເຊື່ອມໂຍງກັບ ພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາ ເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 ລະບົບລະຫັດສາລະບານສະຖິຕິ**

ລະບົບລະຫັດສາລະບານສະຖິຕິ ແມ່ນ ການຈັດແບ່ງຂໍ້ມູນສະຖິຕິ ອອກເປັນ ຂະແໜງ, ພາກ, ກຸ່ມ, ໝວດ, ໝວດຍ່ອຍ ໂດຍອີງໃສ່ມາດຕະຖານຂອງສາກົນ ຊຶ່ງນຳໃຊ້ລະຫັດ ທີ່ເປັນ ຕົວເລກ ຫຼື ຕົວອັກສອນ ໃນການກຳນົດ ເພື່ອຄວາມເປັນເອກະພາບ ໃນການຜະລິດ ແລະ ການເຜີຍແຜ່ຂໍ້ມູນສະຖິຕິ ຂອງລະບົບການຈັດຕັ້ງສະຖິຕິແຫ່ງຊາດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຂະແໜງ** ໝາຍເຖິງ ການແບ່ງສ່ວນ ຫຼື ແຍກສ່ວນລະຫັດ ໃນລະດັບໃຫຍ່ສຸດ ທີ່ມີຄວາມແຕກຕ່າງກັນອອກຈາກກັນເປັນສ່ວນຍ່ອຍ ທີ່ສະແດງດ້ວຍ ຕົວອັກສອນ ຫຼື ຕົວເລກ;

2. **ພາກ** ໝາຍເຖິງ ການແບ່ງລະຫັດອອກເປັນສ່ວນ ຫຼື ການແຍກສ່ວນ ຂອງລະຫັດທີ່ຢູ່ໃນກຸ່ມດຽວອອກເປັນສ່ວນ;

3. **ກຸ່ມ** ໝາຍເຖິງ ການຈັດກຸ່ມຂອງລະຫັດ ຫຼື ການແບ່ງສ່ວນຕ່າງໆ ຂອງລະຫັດ ອອກເປັນສ່ວນຕາມຄວາມເໝາະສົມ;

4. **ໝວດ** ໝາຍເຖິງ ການກຳນົດຄຸນລັກສະນະ ຫຼື ລັກສະນະຕ່າງໆ ຂອງກິດຈະກຳ ຊຶ່ງແມ່ນການກຳນົດລະຫັດ ແລະ ຈັດລຽງ ຕາມລຳດັບ;

5. **ໝວດຍ່ອຍ** ໝາຍເຖິງ ການຈັດແບ່ງປະເພດລະຫັດກິດຈະກຳ ທີ່ແທດເໝາະກັບສະພາບຄວາມເປັນຈິງຍ່ອຍລົງມາ.

**ມາດຕາ 4 ຫຼັກການກ່ຽວກັບວຽກງານລະບົບລະຫັດສາລະບານສະຖິຕິ**

ຫຼັກການກ່ຽວກັບວຽກງານລະບົບລະຫັດສາລະບານສະຖິຕິ ມີ ດັ່ງນີ້:

1. ສອດຄ່ອງກັບ ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ແລະ ແຜນຍຸດທະສາດກ່ຽວກັບວຽກງານສະຖິຕິແຫ່ງຊາດ;
2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;
3. ເກັບຮັກສາຂໍ້ມູນ ຢ່າງເປັນລະບົບ ແລະ ສາມາດສະໜອງ, ເຂົ້າເຖິງ ແລະ ນຳໃຊ້ ໄດ້ຢ່າງທັນການ;
4. ຮັບປະກັນຄວາມຖືກຕ້ອງ ແລະ ນຳໃຊ້ວິທະຍາສາດດ້ານສະຖິຕິ ຕາມມາດຕະຖານສາກົນ ແລະ ມາດຕະຖານແຫ່ງຊາດ;
5. ສອດຄ່ອງກັບສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

**ມາດຕາ 5 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນກັບວຽກງານລະບົບລະຫັດສາລະບານສະຖິຕິ ຢູ່ ສປປ ລາວ.

## ໝວດທີ 2
## ການຈັດແບ່ງລະບົບລະຫັດສາລະບານສະຖິຕິ

**ມາດຕາ 6 ການຈັດແບ່ງລະບົບລະຫັດສາລະບານສະຖິຕິ**

ລະບົບລະຫັດສາລະບານສະຖິຕິ ໄດ້ຖືກຈັດແບ່ງ ດັ່ງນີ້:

1. ການຈັດແບ່ງລະຫັດການປົກຄອງ ກະຊວງ ແລະ ອົງການ;
2. ການຈັດແບ່ງລະຫັດການປົກຄອງ ແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ ແລະ ບ້ານ;
3. ການຈັດແບ່ງຂະແໜງເສດຖະກິດມາດຕະຖານສາກົນ;
4. ການຈັດແບ່ງ ໝວດ ແລະ ລະຫັດ ຂອງສິນຄ້າ ຕາມລະບົບເອກະພາບ;
5. ການຈັດແບ່ງ ໝວດສຳລັບການຄ້າລະຫວ່າງປະເທດລະບົບມາດຕະຖານ;
6. ການຈັດແບ່ງຜະລິດຕະພັນ;

7. ການຈັດແບ່ງການໃຊ້ຈ່າຍຂອງລັດຖະບານ;
8. ການຈັດແບ່ງສະຖິຕິການເງິນແຫ່ງລັດ;
9. ການຈັດແບ່ງການໃຊ້ຈ່າຍຂອງສະຖາບັນ ບໍ່ສະແຫວງຫາຜົນກຳໄລ ກ່ຽວກັບການບໍລິການພາກຄົວເຮືອນ;
10. ການຈັດແບ່ງການໃຊ້ຈ່າຍ ຕາມຈຸດປະສົງຂອງສ່ວນບຸກຄົນໃນຄົວເຮືອນ;
11. ການຈັດແບ່ງຜະລິດຕະພັນ ຕາມຂະແໜງເສດຖະກິດ;
12. ການຈັດແບ່ງປະເພດອີງຕາມຄ່າໃຊ້ຈ່າຍຂອງຜູ້ຜະລິດໂດຍອີງຕາມຈຸດປະສົງ;
13. ການຈັດແບ່ງອາຊີບມາດຕະຖານສາກົນ;
14. ການຈັດແບ່ງໝວດຂະແໜງເສດຖະກິດແບບທົ່ວໄປ;
15. ການຈັດແບ່ງສະຖານະພາບໃນການສ້າງວຽກເຮັດງານທຳ;
16. ການຈັດແບ່ງເຊື້ອພະຍາດສາກົນ;
17. ລະຫັດສາລະບານອື່ນ ທີ່ສູນສະຖິຕິແຫ່ງຊາດ ສ້າງຂຶ້ນໃນແຕ່ລະໄລຍະ ເມື່ອມີຄວາມຈຳເປັນ.

**ມາດຕາ 7 ການຈັດແບ່ງ ລະຫັດການປົກຄອງ ກະຊວງ ແລະ ອົງການ**

ລະຫັດການປົກຄອງ ກະຊວງ ແລະ ອົງການ ຕາມສາຍຕັ້ງຮອດທ້ອງຖິ່ນ ໄດ້ຖືກຈັດແບ່ງ ຕາມຂົງເຂດການເມືອງ, ເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ ໂດຍກຳນົດໂຄງສ້າງລະຫັດ ດັ່ງນີ້:

1. ກົມ, ອົງການລັດທຽບເທົ່າກົມ ທີ່ຂຶ້ນກັບກະຊວງ ແລະ ອົງການ ມີ ສີ່ ຕົວເລກ;
2. ພະແນກ ທີ່ຂຶ້ນກັບ ກົມ, ອົງການລັດທຽບເທົ່າກົມ ມີ ຫົກ ຕົວເລກ;
3. ພະແນກ ທີ່ຂຶ້ນກັບ ແຂວງ, ນະຄອນຫຼວງ ມີ ສີ່ ຕົວເລກ;
4. ຂະແໜງ ທີ່ຂຶ້ນກັບ ພະແນກຂອງແຂວງ, ນະຄອນຫຼວງ ມີ ຫົກ ຕົວເລກ;
5. ຫ້ອງການ ທີ່ຂຶ້ນກັບ ເມືອງ, ເທດສະບານ, ນະຄອນ ມີ ຫົກ ຕົວເລກ;
6. ໜ່ວຍງານ ທີ່ຂຶ້ນກັບ ຫ້ອງການ ເມືອງ, ເທດສະບານ, ນະຄອນ ມີ ແປດ ຕົວເລກ.

ສູນສະຖິຕິແຫ່ງຊາດ ເປັນເຈົ້າການປະສານສົມທົບກັບ ກະຊວງພາຍໃນ, ກະຊວງປ້ອງກັນຄວາມສະຫງົບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າ ດັດປັບ ລະຫັດການປົກຄອງ ກະຊວງ ແລະ ອົງການ ຕາມສາຍຕັ້ງຮອດທ້ອງຖິ່ນ ໃນແຕ່ລະໄລຍະ ເພື່ອຮັບປະກັນຄວາມເປັນເອກະພາບ ແລະ ສອດຄ່ອງກັບສະພາບຕົວຈິງ.

**ມາດຕາ 8 ການຈັດແບ່ງລະຫັດການປົກຄອງ ແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ ແລະ ບ້ານ**

ລະຫັດການປົກຄອງ ແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ ແລະ ບ້ານ ໄດ້ຖືກຈັດແບ່ງ ຕາມຫຼັກການກຳນົດຈຸດທີ່ຕັ້ງຂອງ ແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ ແລະ ບ້ານ ໂດຍກຳນົດໂຄງສ້າງລະຫັດ ດັ່ງນີ້:

1. ແຂວງ, ນະຄອນຫຼວງ ມີ ສອງ ຕົວເລກ;
2. ເມືອງ, ເທດສະບານ, ນະຄອນ ມີ ສີ່ ຕົວເລກ;
3. ບ້ານ ມີ ເຈັດ ຕົວເລກ.

ສູນສະຖິຕິແຫ່ງຊາດ ເປັນເຈົ້າການປະສານສົມທົບກັບ ກະຊວງພາຍໃນ, ກະຊວງປ້ອງກັນຄວາມສະຫງົບ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າ ດັດປັບ ລະຫັດການປົກຄອງ

ແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ ແລະ ບ້ານ ໃນແຕ່ລະໄລຍະ ເພື່ອຮັບປະກັນຄວາມເປັນເອກະພາບ ແລະ ສອດຄ່ອງກັບສະພາບຕົວຈິງ.

**ມາດຕາ 9 ການຈັດແບ່ງຂະແໜງເສດຖະກິດມາດຕະຖານສາກົນ**

ຂະແໜງເສດຖະກິດມາດຕະຖານສາກົນ ໄດ້ຖືກຈັດແບ່ງ ຕາມກິດຈະກຳດ້ານເສດຖະກິດຂອງ ສປປ ລາວ ແລະ ມາດຕະຖານສາກົນ ໂດຍຈັດເຂົ້າເປັນ ຂະແໜງ, ພາກ, ກຸ່ມ ແລະ ໝວດ ຂອງແຕ່ລະກິດຈະກຳ ດ້ານເສດຖະກິດ ຕາມໂຄງສ້າງລະຫັດ ດັ່ງນີ້:

1. ຂະແໜງ ກຳນົດເປັນຕົວອັກສອນ A ຫາ U;
2. ພາກ ມີ ສອງ ຕົວເລກ;
3. ກຸ່ມ ມີ ສາມ ຕົວເລກ;
4. ໝວດ ມີ ສີ່ ຕົວເລກ.

ສູນສະຖິຕິແຫ່ງຊາດ ເປັນເຈົ້າການປະສານສົມທົບກັບ ບັນດາກະຊວງ, ອົງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າດັດປັບລະຫັດຂະແໜງເສດຖະກິດ ມາດຕະຖານສາກົນ ໃນແຕ່ລະໄລຍະ ໂດຍອີງຕາມສະພາບ ແລະ ເງື່ອນໄຂຕົວຈິງຂອງການພັດທະນາເສດຖະກິດ-ສັງຄົມ.

**ມາດຕາ 10 ການຈັດແບ່ງໝວດ ແລະ ລະຫັດ ຂອງສິນຄ້າ ຕາມລະບົບເອກະພາບ**

ໝວດ ແລະ ລະຫັດ ຂອງສິນຄ້າ ຕາມລະບົບເອກະພາບ ໄດ້ຖືກຈັດແບ່ງ ຕາມການນຳເຂົ້າ-ສົ່ງອອກສິນຄ້າ ພາຍຫຼັງໄດ້ກຳນົດຜະລິດຕະພັນ ແລະ ກຳນົດພາສີ ໂດຍຈັດເຂົ້າເປັນ ຂະແໜງ, ພາກ, ກຸ່ມ, ໝວດ ແລະ ໝວດຍ່ອຍ ຕາມໂຄງສ້າງລະຫັດ ດັ່ງນີ້:

1. ຂະແໜງ ມີ ໜຶ່ງ ຕົວເລກ;
2. ພາກ ມີ ສອງ ຕົວເລກ;
3. ກຸ່ມ ມີ ສາມ ຕົວເລກ;
4. ໝວດ ມີ ສີ່ ຕົວເລກ;
5. ໝວດຍ່ອຍ ມີ ຫ້າ ຕົວເລກ.

ສູນສະຖິຕິແຫ່ງຊາດ ເປັນເຈົ້າການປະສານສົມທົບກັບ ກະຊວງການເງິນ, ກະຊວງອຸດສາຫະກຳ ແລະ ການຄ້າ, ທະນາຄານແຫ່ງ ສປປ ລາວ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າ ດັດປັບ ການຈັດແບ່ງໝວດ ແລະ ລະຫັດ ຂອງສິນຄ້າ ຕາມລະບົບເອກະພາບ ໃນແຕ່ລະໄລຍະ.

**ມາດຕາ 11 ການຈັດແບ່ງໝວດສຳລັບການຄ້າລະຫວ່າງປະເທດລະບົບມາດຕະຖານ**

ໝວດສຳລັບການຄ້າລະຫວ່າງປະເທດລະບົບມາດຕະຖານ ໄດ້ຖືກຈັດແບ່ງ ຕາມໝວດ ແລະ ລະຫັດຂອງສິນຄ້າ ຕາມລະບົບເອກະພາບ, ຊື່ຜະລິດຕະພັນ, ຂໍ້ມູນກ່ຽວກັບຄຸນລັກສະນະ, ສ່ວນປະກອບ ແລະ ວັດຖຸດິບທີ່ນຳໃຊ້ເຂົ້າໃນການຜະລິດສິນຄ້າ ໂດຍຈັດເຂົ້າເປັນ ຂະແໜງ, ພາກ, ກຸ່ມ, ໝວດ ແລະ ໝວດຍ່ອຍ ຕາມໂຄງສ້າງລະຫັດ ດັ່ງນີ້:

1. ຂະແໜງ ມີ ໜຶ່ງ ຕົວເລກ;
2. ພາກ ມີ ສອງ ຕົວເລກ;
3. ກຸ່ມ ມີ ສາມ ຕົວເລກ;
4. ໝວດ ມີ ສີ່ ຕົວເລກ;
5. ໝວດຍ່ອຍ ມີ ຫ້າ ຕົວເລກ.

ສູນສະຖິຕິແຫ່ງຊາດ ເປັນເຈົ້າການປະສານສົມທົບກັບ ກະຊວງອຸດສາຫະກໍາ ແລະ ການຄ້າ, ກະຊວງກະສິກໍາ ແລະ ປ່າໄມ້, ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າ ດັດປັບ ການຈັດແບ່ງໝວດສໍາລັບການຄ້າລະຫວ່າງປະເທດລະບົບມາດຕະຖານ ໃນແຕ່ລະໄລຍະ.

**ມາດຕາ 12 ການຈັດແບ່ງຜະລິດຕະພັນ**

ຜະລິດຕະພັນ ໄດ້ຖືກຈັດແບ່ງ ຕາມການຈັດລະຫັດສະຖິຕິຜະລິດຕະພັນສິນຄ້າ ແລະ ການບໍລິການທຸກປະເພດ ເປັນຕົ້ນ ຂະແໜງການເສດຖະກິດ, ສັງຄົມ, ຫົວໜ່ວຍພື້ນຖານ ລວມທັງຢູ່ສູນກາງ ແລະ ທ້ອງຖິ່ນ ທີ່ມີການເຄື່ອນໄຫວກິດຈະກໍາດ້ານເສດຖະກິດ ແລະ ການສໍາຫຼວດສະຖິຕິຕ່າງໆ ທີ່ເປັນລະບົບເອກະພາບ ໂດຍຈັດເຂົ້າເປັນ ຂະແໜງ, ພາກ, ກຸ່ມ, ໝວດ ແລະ ໝວດຍ່ອຍ ຕາມໂຄງສ້າງລະຫັດ ດັ່ງນີ້:

1. ຂະແໜງ ມີ ໜຶ່ງ ຕົວເລກ;
2. ພາກ ມີ ສອງ ຕົວເລກ;
3. ກຸ່ມ ມີ ສາມ ຕົວເລກ;
4. ໝວດ ມີ ສີ່ ຕົວເລກ;
5. ໝວດຍ່ອຍ ມີ ຫ້າ ຕົວເລກ.

ສູນສະຖິຕິແຫ່ງຊາດ ເປັນເຈົ້າການປະສານສົມທົບກັບ ກະຊວງອຸດສາຫະກໍາ ແລະ ການຄ້າ, ກະຊວງກະສິກໍາ ແລະ ປ່າໄມ້ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າ ດັດປັບ ການຈັດແບ່ງຜະລິດຕະພັນໃນແຕ່ລະໄລຍະ.

**ມາດຕາ 13 ການຈັດແບ່ງການໃຊ້ຈ່າຍຂອງລັດຖະບານ**

ການໃຊ້ຈ່າຍຂອງລັດຖະບານ ໄດ້ຖືກຈັດແບ່ງ ຕາມຈຸດປະສົງ ແລະ ເປົ້າໝາຍຂອງການໃຊ້ຈ່າຍ ໂດຍຈັດເຂົ້າເປັນ ຂະແໜງ, ພາກ, ໝວດ ແລະ ໝວດຍ່ອຍ ຕາມໂຄງສ້າງລະຫັດ ດັ່ງນີ້:

1. ຂະແໜງ ມີ ໜຶ່ງ ຕົວເລກ;
2. ພາກ ມີ ສອງ ຕົວເລກ;
3. ໝວດ ມີ ສາມ ຕົວເລກ;
4. ໝວດຍ່ອຍ ມີ ສີ່ ຕົວເລກ.

ກະຊວງການເງິນ ເປັນເຈົ້າການປະສານສົມທົບກັບ ສູນສະຖິຕິແຫ່ງຊາດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າ ດັດປັບ ການຈັດແບ່ງການໃຊ້ຈ່າຍຂອງລັດຖະບານ ໃນແຕ່ລະໄລຍະ.

**ມາດຕາ 14 ການຈັດແບ່ງສະຖິຕິການເງິນແຫ່ງລັດ**

ສະຖິຕິການເງິນແຫ່ງລັດ ໄດ້ຖືກຈັດແບ່ງ ຕາມຫຼັກການດ້ານເສດຖະກິດ ແລະ ການບັນຊີ ທີ່ນໍາໃຊ້ເຂົ້າໃນການສັງລວມ, ຄິດໄລ່, ວິເຄາະ ແລະ ນໍາສະເໜີ ຂໍ້ມູນສະຖິຕິການເງິນ ລວມທັງການນໍາໃຊ້ເປັນບັນຊີຄວບຄຸມ, ວິເຄາະດ້ານງົບປະມານ ແລະ ປະເມີນນະໂຍບາຍການເງິນຂອງລັດ ໂດຍຈັດເຂົ້າເປັນ ຂະແໜງ, ພາກ, ໝວດ ແລະ ໝວດຍ່ອຍ ຕາມໂຄງສ້າງລະຫັດ ດັ່ງນີ້:

1. ຂະແໜງ ມີ ໜຶ່ງ ຕົວເລກ;
2. ພາກ ມີ ສອງ ຕົວເລກ;
3. ໝວດ ມີ ສາມ ຕົວເລກ;
4. ໝວດຍ່ອຍ ມີ ສີ່ ຕົວເລກ.

ກະຊວງການເງິນ ເປັນເຈົ້າການປະສານສົມທົບກັບ ສູນສະຖິຕິແຫ່ງຊາດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າ ດັດປັບ ການຈັດແບ່ງສະຖິຕິການເງິນແຫ່ງລັດ ໃນແຕ່ລະໄລຍະ.

**ມາດຕາ 15 ການຈັດແບ່ງການໃຊ້ຈ່າຍຂອງສະຖາບັນ ບໍ່ສະແຫວງຫາຜົນກຳໄລ ກ່ຽວກັບການບໍລິການພາກຄົວເຮືອນ**

ການໃຊ້ຈ່າຍຂອງສະຖາບັນ ບໍ່ສະແຫວງຫາຜົນກຳໄລ ກ່ຽວກັບການບໍລິການພາກຄົວເຮືອນ ໄດ້ຖືກຈັດແບ່ງ ຕາມການຊົມໃຊ້ ແລະ ການໃຊ້ຈ່າຍຂອງສະຖາບັນບໍ່ສະແຫວງຫາຜົນກຳໄລ ທີ່ໃຫ້ບໍລິການແກ່ຄົວເຮືອນ, ການຊົມໃຊ້ ແລະ ການໃຊ້ຈ່າຍສ່ວນບຸກຄົນ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງລັດຖະບານ ໂດຍຈັດເຂົ້າເປັນ ຂະແໜງ, ພາກ, ໝວດ ແລະ ໝວດຍ່ອຍ ຕາມໂຄງສ້າງລະຫັດ ດັ່ງນີ້:

1. ຂະແໜງ ມີ ໜຶ່ງ ຕົວເລກ;
2. ພາກ ມີ ສອງ ຕົວເລກ;
3. ໝວດ ມີ ສາມ ຕົວເລກ;
4. ໝວດຍ່ອຍ ມີ ສີ່ ຕົວເລກ.

ສູນສະຖິຕິແຫ່ງຊາດ ເປັນເຈົ້າການປະສານສົມທົບກັບ ກະຊວງພາຍໃນ, ກະຊວງການເງິນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າ ດັດປັບ ການຈັດແບ່ງການໃຊ້ຈ່າຍຂອງສະຖາບັນ ບໍ່ສະແຫວງຫາຜົນກຳໄລ ກ່ຽວກັບການບໍລິການພາກຄົວເຮືອນ ໃນແຕ່ລະໄລຍະ.

**ມາດຕາ 16 ການຈັດແບ່ງການໃຊ້ຈ່າຍຕາມຈຸດປະສົງຂອງສ່ວນບຸກຄົນໃນຄົວເຮືອນ**

ການໃຊ້ຈ່າຍຕາມຈຸດປະສົງຂອງສ່ວນບຸກຄົນໃນຄົວເຮືອນ ໄດ້ຖືກຈັດແບ່ງ ຕາມຄ່າໃຊ້ຈ່າຍສຳລັບການບໍລິໂພກ ແລະ ການເຄື່ອນໄຫວ ຂອງບຸກຄົນໃນຄົວເຮືອນ ເປັນຕົ້ນ ຄ່າໃຊ້ຈ່າຍສຳລັບການຂົນສົ່ງ, ການສຶກສາ, ການປິ່ນປົວສຸຂະພາບ, ການພັກຜ່ອນ ໂດຍຈັດເຂົ້າເປັນ ຂະແໜງ, ພາກ, ໝວດ ແລະ ໝວດຍ່ອຍ ຕາມໂຄງສ້າງລະຫັດ ດັ່ງນີ້:

1. ຂະແໜງ ມີ ໜຶ່ງ ຕົວເລກ;
2. ພາກ ມີ ສອງ ຕົວເລກ;
3. ໝວດ ມີ ສາມ ຕົວເລກ;
4. ໝວດຍ່ອຍ ມີ ສີ່ ຕົວເລກ.

ສູນສະຖິຕິແຫ່ງຊາດ ເປັນເຈົ້າການປະສານສົມທົບກັບ ກະຊວງອຸດສາຫະກຳ ແລະ ການຄ້າ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າ ດັດປັບ ການຈັດແບ່ງການໃຊ້ຈ່າຍ ຕາມຈຸດປະສົງຂອງສ່ວນບຸກຄົນໃນຄົວເຮືອນ ໃນແຕ່ລະໄລຍະ.

**ມາດຕາ 17 ການຈັດແບ່ງຜະລິດຕະພັນຕາມຂະແໜງເສດຖະກິດ**

ຜະລິດຕະພັນ ຕາມຂະແໜງເສດຖະກິດ ໄດ້ຖືກຈັດແບ່ງ ຕາມຜະລິດຕະພັນທີ່ມີລັກສະນະທົ່ວໄປ ເພື່ອເປັນພື້ນຖານໃນການ ເກັບກຳ ແລະ ຄິດໄລ່ ຕາມຫຼັກການສະຖິຕິກ່ຽວກັບຜະລິດຕະພັນ, ການຊົມໃຊ້, ການຄ້າພາຍໃນ, ການຄ້າລະຫວ່າງປະເທດ ແລະ ການຂົນສົ່ງຜະລິດຕະພັນ ໂດຍຈັດເຂົ້າເປັນ ຂະແໜງ, ພາກ, ກຸ່ມ, ໝວດ ແລະ ໝວດຍ່ອຍ ຕາມໂຄງສ້າງລະຫັດ ດັ່ງນີ້:

1. ຂະແໜງ ມີ ໜຶ່ງ ຕົວເລກ;
2. ພາກ ມີ ສອງ ຕົວເລກ;
3. ກຸ່ມ ມີ ສາມ ຕົວເລກ;
4. ໝວດ ມີ ສີ່ ຕົວເລກ;
5. ໝວດຍ່ອຍ ມີ ຫ້າ ຕົວເລກ.

ສູນສະຖິຕິແຫ່ງຊາດ ເປັນເຈົ້າການປະສານສົມທົບກັບ ກະຊວງອຸດສາຫະກຳ ແລະ ການຄ້າ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າ ດັດປັບ ການຈັດແບ່ງຜະລິດຕະພັນ ຕາມຂະແໜງເສດຖະກິດ ໃນແຕ່ລະໄລຍະ.

**ມາດຕາ 18 ການຈັດແບ່ງປະເພດອີງຕາມຄ່າໃຊ້ຈ່າຍຂອງຜູ້ຜະລິດໂດຍອີງຕາມຈຸດປະສົງ**

ປະເພດອີງຕາມຄ່າໃຊ້ຈ່າຍຂອງຜູ້ຜະລິດໂດຍອີງຕາມຈຸດປະສົງ ໄດ້ຖືກຈັດແບ່ງ ຕາມຄ່າໃຊ້ຈ່າຍໃນການປົກປັກຮັກສາສິ່ງແວດລ້ອມ, ການຕະຫຼາດ, ການພັດທະນາຊັບພະຍາກອນມະນຸດ, ການຄົ້ນຄວ້າ ແລະ ພັດທະນາຂອງຜູ້ຜະລິດ ເພື່ອສະໜອງຜະລິດຕະພັນໃຫ້ແກ່ຕະຫຼາດ ຍົກເວັ້ນ ປະເພດຄ່າໃຊ້ຈ່າຍຂອງທຸລະກິດທາງດ້ານການເງິນ ໂດຍຈັດເຂົ້າເປັນ ຂະແໜງ, ພາກ, ໝວດ ແລະ ໝວດຍ່ອຍ ຕາມໂຄງສ້າງລະຫັດ ດັ່ງນີ້:

1. ຂະແໜງ ມີ ໜຶ່ງ ຕົວເລກ;
2. ພາກ ມີ ສອງ ຕົວເລກ;
3. ໝວດ ມີ ສາມ ຕົວເລກ;
4. ໝວດຍ່ອຍ ມີ ສີ່ ຕົວເລກ.

ສູນສະຖິຕິແຫ່ງຊາດ ເປັນເຈົ້າການປະສານສົມທົບກັບ ກະຊວງອຸດສາຫະກຳ ແລະ ການຄ້າ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າ ດັດປັບ ການຈັດແບ່ງປະເພດອີງຕາມຄ່າໃຊ້ຈ່າຍຂອງຜູ້ຜະລິດໂດຍອີງຕາມຈຸດປະສົງ ໃນແຕ່ລະໄລຍະ.

**ມາດຕາ 19 ການຈັດແບ່ງອາຊີບມາດຕະຖານສາກົນ**

ອາຊີບມາດຕະຖານສາກົນ ໄດ້ຖືກຈັດແບ່ງ ຕາມການຈັດແບ່ງປະເພດອາຊີບ ທີ່ອົງການແຮງງານສາກົນ ກຳນົດ ເພື່ອນຳໃຊ້ເຂົ້າໃນການວິເຄາະ, ວິໄຈ, ວາງແຜນ ແລະ ກຳນົດຍຸດທະສາດ ກ່ຽວກັບຕະຫຼາດແຮງງານ ໃຫ້ສອດຄ່ອງກັບການພັດທະນາເສດຖະກິດ-ສັງຄົມ ໂດຍຈັດເຂົ້າເປັນ ຂະແໜງ, ພາກ, ກຸ່ມ, ໝວດ ແລະ ໝວດຍ່ອຍ ຕາມໂຄງສ້າງລະຫັດ ດັ່ງນີ້:

1. ຂະແໜງ ມີ ໜຶ່ງ ຕົວເລກ;
2. ພາກ ມີ ສອງ ຕົວເລກ;
3. ກຸ່ມ ມີ ສາມ ຕົວເລກ;
4. ໝວດ ມີ ສີ່ ຕົວເລກ;
5. ໝວດຍ່ອຍ ມີ ຫົກ ຕົວເລກ.

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນເຈົ້າການປະສານສົມທົບກັບ ສູນສະຖິຕິແຫ່ງຊາດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າ ດັດປັບ ການຈັດແບ່ງອາຊີບມາດຕະຖານສາກົນ ໃນແຕ່ລະໄລຍະ.

**ມາດຕາ 20 ການຈັດແບ່ງໝວດຂະແໜງເສດຖະກິດແບບທົ່ວໄປ**

ໝວດຂະແໜງເສດຖະກິດແບບທົ່ວໄປ ໄດ້ຖືກຈັດແບ່ງ ຕາມປະເພດຜະລິດຕະພັນທີ່ມີຢູ່ ແລະ ການຈຳແນກສິນຄ້າເປັນລາຍລະອຽດ ຕາມມາດຕະຖານການຈັດ ປະເພດ, ໝວດ ຂອງຜະລິດຕະພັນ ແລະ ສິນຄ້າສາກົນ ໂດຍຈັດເຂົ້າເປັນ ຂະແໜງ, ພາກ, ກຸ່ມ, ໝວດ ແລະ ໝວດຍ່ອຍ ຕາມໂຄງສ້າງລະຫັດ ດັ່ງນີ້:

1. ຂະແໜງ ມີ ໜຶ່ງ ຕົວເລກ;
2. ພາກ ມີ ສອງ ຕົວເລກ;
3. ກຸ່ມ ມີ ສາມ ຕົວເລກ;
4. ໝວດ ມີ ສີ່ ຕົວເລກ;
5. ໝວດຍ່ອຍ ມີ ຫ້າ ຕົວເລກ.

ສູນສະຖິຕິແຫ່ງຊາດ ເປັນເຈົ້າການປະສານສົມທົບກັບ ກະຊວງອຸດສາຫະກຳ ແລະ ການຄ້າ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າ ດັດປັບ ການຈັດແບ່ງໝວດ

ຂະແໜງເສດຖະກິດແບບທົ່ວໄປ ໃນແຕ່ລະໄລຍະ.

**ມາດຕາ 21 ການຈັດແບ່ງສະຖານະພາບໃນການສ້າງວຽກເຮັດງານທຳ**

ສະຖານະພາບໃນການສ້າງວຽກເຮັດງານທຳ ໄດ້ຖືກຈັດແບ່ງ ຕາມສະພາບຂອງການມີວຽກເຮັດງານທຳ ພາຍໃນປະເທດ, ຄວາມຕ້ອງການ ແລະ ການສະໜອງແຮງງານ ເພື່ອເປັນພື້ນຖານສຳລັບການສຳຫຼວດກ່ຽວກັບແຮງງານ ໂດຍຈັດເຂົ້າເປັນ ຂະແໜງ, ພາກ, ກຸ່ມ, ໝວດ ແລະ ໝວດຍ່ອຍ ຕາມໂຄງສ້າງລະຫັດ ດັ່ງນີ້:

1. ຂະແໜງ ມີ ໜຶ່ງ ຕົວເລກ;
2. ພາກ ມີ ສອງ ຕົວເລກ;
3. ກຸ່ມ ມີ ສາມ ຕົວເລກ;
4. ໝວດ ມີ ສີ່ ຕົວເລກ;
5. ໝວດຍ່ອຍ ມີ ຫ້າ ຕົວເລກ.

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນເຈົ້າການປະສານສົມທົບກັບ ສູນສະຖິຕິແຫ່ງຊາດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າ ດັດປັບ ການຈັດແບ່ງສະຖານະພາບ ໃນການສ້າງວຽກເຮັດງານທຳ ໃນແຕ່ລະໄລຍະ.

**ມາດຕາ 22 ການຈັດແບ່ງເຊື້ອພະຍາດສາກົນ**

ເຊື້ອພະຍາດສາກົນ ໄດ້ຖືກຈັດແບ່ງ ຕາມການຈັດປະເພດພະຍາດ ທີ່ອົງການອະນາໄມໂລກ ກຳນົດ ບົນພື້ນຖານ ດ້ານສຸຂະພາບ, ປະເພດພະຍາດ ແລະ ການປິ່ນປົວ ເພື່ອໃຫ້ສາມາດ ເກັບກຳ ແລະ ວິເຄາະຂໍ້ມູນສະຖິຕິກ່ຽວກັບເຊື້ອພະຍາດສາກົນ ຢ່າງເປັນລະບົບ ໂດຍຈັດເຂົ້າເປັນ ຂະແໜງ, ພາກ, ກຸ່ມ, ໝວດ ແລະ ໝວດຍ່ອຍ ຕາມໂຄງສ້າງລະຫັດ ດັ່ງນີ້:

1. ຂະແໜງ ມີ ໜຶ່ງ ຕົວເລກ;
2. ພາກ ມີ ສອງ ຕົວເລກ;
3. ກຸ່ມ ມີ ສາມ ຕົວເລກ;
4. ໝວດ ມີ ສີ່ ຕົວເລກ;
5. ໝວດຍ່ອຍ ມີ ຫ້າ ຕົວເລກ.

ກະຊວງສາທາລະນະສຸກ ເປັນເຈົ້າການປະສານສົມທົບກັບ ສູນສະຖິຕິແຫ່ງຊາດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າ ດັດປັບ ການຈັດແບ່ງເຊື້ອພະຍາດສາກົນ ໃນແຕ່ລະໄລຍະ.

## ໝວດທີ 3
## ການສ້າງ, ການນຳໃຊ້ ແລະ ການປະເມີນ ລະບົບລະຫັດສາລະບານສະຖິຕິ

**ມາດຕາ 23 ການສ້າງລະບົບລະຫັດສາລະບານສະຖິຕິ**

ລະບົບລະຫັດສາລະບານສະຖິຕິແຫ່ງຊາດ ຕ້ອງສ້າງຂຶ້ນ ຕາມຫຼັກການວິທະຍາສາດ, ມາດຕະຖານທີ່ສາກົນວາງອອກ, ແທດເໝາະກັບສະພາບ ແລະ ເງື່ອນໄຂຄວາມເປັນຈິງ ຂອງ ສປປ ລາວ.

ສູນສະຖິຕິແຫ່ງຊາດ ເປັນເຈົ້າການປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າສ້າງ ແລະ ດັດປັບລະບົບລະຫັດສາລະບານສະຖິຕິ ເພື່ອສະເໜີລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ພິຈາລະນາ.

**ມາດຕາ 24 ການນຳໃຊ້ລະບົບລະຫັດສາລະບານສະຖິຕິ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ສາມາດເຂົ້າເຖິງ ລະບົບລະຫັດສາລະບານສະຖິຕິ ທີ່ອົງການຮັບຜິດຊອບສ້າງລະບົບລະຫັດສາລະບານສະຖິຕິ ປະກາດໃຊ້ ແລະ ເຜີຍແຜ່ຢ່າງເປັນທາງການ ໃນລະບົບເອເລັກໂຕຣນິກ, ສື່ສິ່ງພິມ ແລະ ເວັບໄຊ ຂອງສູນສະຖິຕິແຫ່ງຊາດ ຫຼື ອົງການທີ່ກ່ຽວຂ້ອງ.

ການນຳໃຊ້ ລະບົບລະຫັດສາລະບານສະຖິຕິ ຕ້ອງລົງທະບຽນ ແລະ ແຈ້ງລາຍລະອຽດກ່ຽວກັບຈຸດປະສົງຂອງການນຳໃຊ້ ຕາມແບບພິມ ທີ່ການຈັດຕັ້ງສະຖິຕິລະບົບ ສາຍຕັ້ງ ແລະ ສາຍຂວາງ ໄດ້ກຳນົດໄວ້.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ຫາກມີການເຄື່ອນໄຫວວຽກງານທີ່ກ່ຽວຂ້ອງກັບລະບົບລະຫັດສາລະບານສະຖິຕິ ຕ້ອງນຳໃຊ້ ລະບົບລະຫັດສາລະບານສະຖິຕິ ທີ່ຖືກຮັບຮອງແລະ ປະກາດໃຊ້ ເຂົ້າໃນການບັນທຶກ ແລະ ເກັບກຳຂໍ້ມູນ.

**ມາດຕາ 25 ການປະເມີນລະບົບລະຫັດສາລະບານສະຖິຕິ**

ການຈັດຕັ້ງສະຖິຕິລະບົບ ສາຍຕັ້ງ ແລະ ສາຍຂວາງ ຕ້ອງດຳເນີນການປະເມີນ ລະບົບລະຫັດສາລະບານສະຖິຕິ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ເພື່ອດັດປັບໃຫ້ຖືກຕ້ອງ ແລະ ສອດຄ່ອງກັບສະພາບຄວາມເປັນຈິງໃນແຕ່ລະໄລຍະ.

## ໝວດທີ 4
## ຂໍ້ຫ້າມ

**ມາດຕາ 26 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີ ພຶດຕິກຳ ດັ່ງນີ້:

1. ນຳໃຊ້ລະບົບລະຫັດສາລະບານສະຖິຕິ ໂດຍບໍ່ຖືກຕ້ອງ;
2. ນຳໃຊ້ລະບົບລະຫັດສາລະບານສະຖິຕິ ເພື່ອສົ່ງ ຫຼື ກະຈາຍໄວຣັດຄອມພິວເຕີ;
3. ທຳລາຍ ຫຼື ສ້າງຄວາມເສຍຫາຍໃຫ້ແກ່ ລະບົບລະຫັດສາລະບານສະຖິຕິ;
4. ປອມແປງ, ບິດເບືອນ ການຈັດແບ່ງລະບົບລະຫັດສາລະບານສະຖິຕິ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 27 ຂໍ້ຫ້າມ ສຳລັບ ພະນັກງານ-ລັດຖະກອນ**

ຫ້າມ ພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງກັບລະບົບລະຫັດສາລະບານສະຖິຕິ ມີ ພຶດຕິກຳ ດັ່ງນີ້:

1. ລາຍງານຂໍ້ມູນກ່ຽວກັບ ລະບົບລະຫັດສາລະບານສະຖິຕິ ທີ່ບໍ່ມີຄວາມຈິງ ຫຼື ບໍ່ຖືກຕ້ອງ;
2. ປອມແປງ, ບິດເບືອນ, ປັບປຸງ, ແກ້ໄຂ, ດັດປັບລະບົບລະຫັດສາລະບານສະຖິຕິ ໂດຍບໍ່ໄດ້ຮັບອະນຸຍາດ;
3. ສວຍໃຊ້ ສິດ ອຳນາດ, ໜ້າທີ່, ຕຳແໜ່ງ ເພື່ອຫາຜົນປະໂຫຍດ ແກ່ຕົນ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກຂອງຕົນ;
4. ລະເມີດຈັນຍາບັນທາງດ້ານສະຖິຕິ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ໝວດທີ 5
## ການຄຸ້ມຄອງ ແລະ ການກວດກາ

**ມາດຕາ 28 ອົງການຄຸ້ມຄອງ ແລະ ກວດກາ ວຽກງານລະບົບລະຫັດສາລະບານສະຖິຕິ**

ກະຊວງແຜນການ ແລະ ການລົງທຶນ ເປັນຜູ້ຄຸ້ມຄອງ ແລະ ກວດກາ ວຽກງານລະບົບລະຫັດສາລະບານສະຖິຕິ ໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານລະບົບລະຫັດສາລະບານສະຖິຕິ ປະກອບດ້ວຍ:

1. ກະຊວງແຜນການ ແລະ ການລົງທຶນ;
2. ພະແນກແຜນການ ແລະ ການລົງທຶນ ແຂວງ, ນະຄອນຫຼວງ;
3. ຫ້ອງການແຜນການ ແລະ ການລົງທຶນ ເມືອງ, ເທດສະບານ, ນະຄອນ.

**ມາດຕາ 29 ສິດ ແລະ ໜ້າທີ່ຂອງກະຊວງແຜນການ ແລະ ການລົງທຶນ**

ກະຊວງແຜນການ ແລະ ການລົງທຶນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ, ປັບປຸງ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ກ່ຽວກັບລະບົບລະຫັດສາລະບານສະຖິຕິ ເພື່ອສະເໜີຕໍ່ລັດຖະບານ ພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ກ່ຽວກັບລະບົບລະຫັດສາລະບານສະຖິຕິ ເປັນລະບຽບການ, ແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;
3. ໂຄສະນາເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານລະບົບລະຫັດສາລະບານສະຖິຕິ;
4. ອອກ, ໂຈະ, ຍົກເລີກ ຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ແລະ ແຈ້ງການ ກ່ຽວກັບວຽກງານລະບົບລະຫັດສາລະບານສະຖິຕິ;
5. ຮັບຮອງເອົາການ ສ້າງ ຫຼື ດັດປັບ ລະບົບລະຫັດສາລະບານສະຖິຕິ;
6. ຊີ້ນໍາ, ຊຸກຍູ້ ການຈັດຕັ້ງສະຖິຕິລະບົບສາຍຕັ້ງ ຂັ້ນສູນກາງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານລະບົບລະຫັດສາລະບານສະຖິຕິ;
7. ຕິດຕາມ ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານລະບົບລະຫັດສາລະບານສະຖິຕິ;
8. ແຈ້ງເຕືອນ, ໂຈະ ຫຼື ຍົກເລີກ ການນໍາໃຊ້ລະບົບລະຫັດສາລະບານສະຖິຕິ ໃນກໍລະນີເຫັນວ່າ ບໍ່ຖືກຕ້ອງ;
9. ສ້າງ, ບໍາລຸງ, ຍົກລະດັບ ແລະ ຝຶກອົບຮົມ ກ່ຽວກັບລະບົບລະຫັດສາລະບານສະຖິຕິ ໃຫ້ພະນັກງານ-ລັດຖະກອນ ທີ່ຮັບຜິດຊອບວຽກງານລະບົບລະຫັດສາລະບານສະຖິຕິ ໃນຂອບເຂດທົ່ວປະເທດ;
10. ຮັບ ແລະ ພິຈາລະນາ ແກ້ໄຂ ຄໍາຮ້ອງ ແລະ ຄໍາສະເໜີ ກ່ຽວກັບການນໍາໃຊ້ລະບົບລະຫັດສາລະບານສະຖິຕິ;
11. ປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບວຽກງານລະບົບລະຫັດສາລະບານສະຖິຕິ;
12. ພົວພັນ ແລະ ຮ່ວມມື ກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານລະບົບລະຫັດສາລະບານສະຖິຕິ;
13. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານລະບົບລະຫັດສາລະບານສະຖິຕິ ໃຫ້ລັດຖະບານຢ່າງເປັນປົກກະຕິ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 30 ສິດ ແລະ ໜ້າທີ່ຂອງພະແນກແຜນການ ແລະ ການລົງທຶນ ແຂວງ, ນະຄອນຫຼວງ**

ພະແນກແຜນການ ແລະ ການລົງທຶນ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບ ລະບົບລະຫັດສາລະບານສະຖິຕິ;
2. ໂຄສະນາເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານລະບົບລະຫັດສາລະບານສະຖິຕິ;
3. ອອກ, ໂຈະ, ຍົກເລີກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານລະບົບລະຫັດສາລະບານສະຖິຕິ;
4. ຄົ້ນຄວ້າ ແລະ ສະເໜີ ລະບົບລະຫັດສາລະບານສະຖິຕິ ຕໍ່ຂັ້ນເທິງ ພິຈາລະນາ;
5. ຊີ້ນຳ, ຊຸກຍູ້ ການຈັດຕັ້ງສະຖິຕິລະບົບສາຍຕັ້ງ ແຂວງ, ນະຄອນຫຼວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານລະບົບລະຫັດສາລະບານສະຖິຕິ;
6. ຕິດຕາມ ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານລະບົບລະຫັດສາລະບານສະຖິຕິ;
7. ແຈ້ງເຕືອນ, ສະເໜີ ໂຈະ ຫຼື ຍົກເລີກ ການນຳໃຊ້ລະບົບລະຫັດສາລະບານສະຖິຕິ ໃນກໍລະນີເຫັນວ່າບໍ່ຖືກຕ້ອງ;
8. ສະເໜີ ສ້າງ, ບຳລຸງ, ຍົກລະດັບ ແລະ ຝຶກອົບຮົມ ວຽກງານລະບົບລະຫັດສາລະບານສະຖິຕິ ໃຫ້ພະນັກງານ-ລັດຖະກອນ ຂັ້ນຂອງຕົນ;
9. ຮັບ ແລະ ພິຈາລະນາ ແກ້ໄຂ ຄຳຮ້ອງ ແລະ ຄຳສະເໜີ ກ່ຽວກັບການນຳໃຊ້ ລະບົບລະຫັດສາລະບານສະຖິຕິ;
10. ປະສານສົມທົບກັບ ພະແນກການອື່ນ, ອົງການ, ອົງການປົກຄອງຂັ້ນເມືອງ ແລະ ພາກສ່ວນອື່ນ ກ່ຽວຂ້ອງກັບວຽກງານລະບົບລະຫັດສາລະບານສະຖິຕິ;
11. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ ກ່ຽວກັບວຽກງານລະບົບລະຫັດສາລະບານສະຖິຕິ ຕາມການມອບໝາຍ;
12. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານລະບົບລະຫັດສາລະບານສະຖິຕິ ໃຫ້ກະຊວງແຜນການ ແລະ ການລົງທຶນ ແລະ ອົງການປົກຄອງ ແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;
13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 31 ສິດ ແລະ ໜ້າທີ່ຂອງຫ້ອງການແຜນການ ແລະ ການລົງທຶນ ເມືອງ, ເທດສະບານ, ນະຄອນ**

ຫ້ອງການແຜນການ ແລະ ການລົງທຶນ ເມືອງ, ເທດສະບານ, ນະຄອນ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບລະບົບລະຫັດສາລະບານສະຖິຕິ;
2. ເຜີຍແຜ່ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານລະບົບລະຫັດສາລະບານສະຖິຕິ;
3. ສະເໜີ ອອກ, ໂຈະ, ຍົກເລີກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານລະບົບລະຫັດສາລະບານສະຖິຕິ;
4. ຄົ້ນຄວ້າ ແລະ ສະເໜີ ລະບົບລະຫັດສາລະບານສະຖິຕິ ຕໍ່ຂັ້ນເທິງ ພິຈາລະນາ;
5. ຊີ້ນຳ, ຊຸກຍູ້ ການຈັດຕັ້ງສະຖິຕິລະບົບສາຍຕັ້ງ ເມືອງ, ເທດສະບານ, ນະຄອນ ກ່ຽວກັບການຈັດຕັ້ງ

ປະຕິບັດວຽກງານລະບົບລະຫັດສາລະບານສະຖິຕິ;

6. ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານລະບົບລະຫັດສາລະບານສະຖິຕິ;

7. ແຈ້ງເຕືອນ, ສະເໜີ ໂຈະ ຫຼື ຍົກເລີກ ການນຳໃຊ້ລະບົບລະຫັດສາລະບານສະຖິຕິ ໃນກໍລະນີເຫັນວ່າບໍ່ຖືກຕ້ອງ;

8. ສະເໜີ ສ້າງ, ບຳລຸງ, ຍົກລະດັບ ແລະ ຝຶກອົບຮົມ ວຽກງານລະບົບລະຫັດສາລະບານສະຖິຕິ ໃຫ້ພະນັກງານ-ລັດຖະກອນ ຂັ້ນຂອງຕົນ;

9. ຮັບ ແລະ ພິຈາລະນາ ແກ້ໄຂ ຄຳຮ້ອງ ແລະ ຄຳສະເໜີ ກ່ຽວກັບການນຳໃຊ້ລະບົບລະຫັດສາລະບານສະຖິຕິ;

10. ປະສານສົມທົບກັບ ຫ້ອງການ, ພາກສ່ວນອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງກັບວຽກງານລະບົບລະຫັດສາລະບານສະຖິຕິ;

11. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານລະບົບລະຫັດສາລະບານສະຖິຕິ ໃຫ້ພະແນກແຜນການ ແລະ ການລົງທຶນ ແລະ ອົງການປົກຄອງ ເມືອງ, ເທດສະບານ, ນະຄອນ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 32 ສິດ ແລະ ໜ້າທີ່ ຂອງກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ**

ໃນການຄຸ້ມຄອງ ແລະ ກວດກາ ວຽກງານລະບົບລະຫັດສາລະບານສະຖິຕິ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ປະສານສົມທົບ ແລະ ໃຫ້ການຮ່ວມມືກັບອົງການຄຸ້ມຄອງວຽກງານລະບົບລະຫັດສາລະບານສະຖິຕິ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບ ຂອງຕົນ.

**ມາດຕາ 33 ເນື້ອໃນການກວດກາ**

ການກວດກາວຽກງານລະບົບລະຫັດສາລະບານສະຖິຕິ ມີ ເນື້ອໃນ ດັ່ງນີ້:

1. ການປະຕິບັດ ນິຕິກຳ ກ່ຽວກັບວຽກງານລະບົບລະຫັດສາລະບານສະຖິຕິ;
2. ການປະຕິບັດໜ້າທີ່ ຂອງພະນັກງານ-ລັດຖະກອນ;
3. ການສ້າງ ແລະ ປະຕິບັດແຜນການ ກ່ຽວກັບກັບວຽກງານລະບົບລະຫັດສາລະບານສະຖິຕິ;
4. ເນື້ອໃນອື່ນ ທີ່ເຫັນວ່າ ມີຄວາມຈຳເປັນ.

**ມາດຕາ 34 ຮູບການການກວດກາ**

ການກວດກາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາ ຕາມປົກກະຕິ ຊຶ່ງແມ່ນການກວດກາທີ່ດຳເນີນ ຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາ ອັນແນ່ນອນ;

2. ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນ ເມື່ອເຫັນວ່າ ມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາ ຊາບລ່ວງໜ້າ;

3. ການກວດກາ ແບບກະທັນຫັນ ຊຶ່ງແມ່ນການກວດກາ ຢ່າງຮີບດ່ວນ ໂດຍບໍ່ແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາ ຮູ້ລ່ວງໜ້າ.

ການກວດກາ ໃຫ້ປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

## ໝວດທີ 6
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 35 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 36 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ຄ່າເສຍຫາຍທາງແພ່ງ ທີ່ຕົນໄດ້ກໍ່ຂຶ້ນ ຫຼື ລົງໂທດທາງອາຍາ ຕາມກົດໝາຍ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 37 ການຈັດຕັ້ງປະຕິບັດ**

ກະຊວງແຜນການ ແລະ ການລົງທຶນ ເປັນເຈົ້າການໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 38 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 14 ກຸມພາ 2025 ເປັນຕົ້ນໄປ.

ຕາງໜ້າລັດຖະບານ
ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

**ສອນໄຊ ສີພັນດອນ**